ເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ຊາວ

ກະສິກອນໃນເຂດບ້ານເປົ້າໝາຍຂອງໂຄງການກະສິກຳເພື່ອໂພຊະນາການ



ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital,
Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ້: www.afn.gov.la

# ກະຊວງກະສິກຳ ແລະ ປ່າໄມ້

27

Investing in rural people

## ປື້ມຄູ່ມືສົ່ງເສີມເຕັກນິກ

# ການປູກຜັກສວນຄົວຕາມລະດູການ





ໂຄງການກະສິກຳ ເພື່ອໂພຊະນາການ

ມັງກອນ, 2019

# ເອກະສານອ້າງອີງ

ພະນັກງານຫາດດອກແກ້ວ. 1998. ຄູ່ມືການປູກຜັກ. ສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ ຫາດດອກແກ້ວ, ກະຊວງກະສິກຳແລະປ່າໄມ້.

ກົມສົ່ງເສີມການກະເສດ 2008. ຜັກສວນຄົວສານສາຍໃຍຮັກຂອງ ຄອບຄົວ. ກຸງເທບ (ພາສາໄທ).

www.vegetweb.com

http://km.nongchoktravel.com/attachknowledge_1438932994_ kasetmanual.pdf

http://www.eto.ku.ac.th/neweto/e-book/plant/herb_gar/garde n.pdf

## 6. ຄາດໝາຍຜົນໄດ້ຮັບ

ການຜະລິດຜັກສວນຄົວແມ່ນ ສາມາດສ້າງລາຍຮັບໃຫ້ແກ່ຜູ້ຜະລິດໄດ້ ແລະ ສາມາດເປັນແຫຼ່ງອາຫານໄດ້ອີກ ເຊິ່ງການຜະລິດຜັກສວນຄວົສາມາດຄາດຄະເນລາຍຮັບໄດ້ດັ່ງນີ້:

ຕາຕະລາງ: ຄາດຄະເນລາຍຮັບຈາກການຜະລິດຜັກສວນຄົວຕາມລະດູ

| ລ/ດ | ຊະນິດພືດ | ຄາດຜົນຜະລິດ(ກລ/ໄລ່) | ລາຄາຂາຍ (ກີບ/ກລ) |
|---|---|---|---|
| 1 | ຜັກກາດຊອມ | 1,470 | 3,500 |
| 2 | ຜັກກາດຂົວ | 1,500 | 3,500 |
| 3 | ຜັກຫອມປ້ອມ | 1,500 | 5,000 |
| 4 | ຜັກຊີ ແລ້ງ | 1,600 | 4,000 |
| 5 | ຜັກສະຫຼັດ | 1,590 | 4,000 |
| 6 | ຜັກຫົມ | 1,200 | 4,500 |
| 7 | ໝາກເລັ່ນ | 2,500 | 4,000 |
| 8 | ໝາກແຕງ | 2,500 | 3,000 |
| 9 | ໝາກເຂືອຍາວ | 2,000 | 3,500 |
| 10 | ໝາກເຜັດ | 1,200 | 7,000 |
| 11 | ຖົ່ວຝັກຍາວ | 1,600 | 4,000 |
| 13 | ຖົ່ວກະແດ | 1,500 | 4,500 |



## ຂໍ້ແນະນຳ

ປື້ມຄູ່ມືນີ້ແມ່ນເຈດຕະນາເຮັດໃຫ້ການນຳໃຊ້ເຄື່ອງມືງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ສະເໜີ ຈຸດປະສົງຂໍ້ມູນເບື້ອງຕົ້ນຂອງການນຳໃຊ້ເຕັກນິກການປູກໝາກເຂືອເປັນສິນຄ້າເພື່ອຊາວກະສິກອນສາມາດ ປັບປຸງການປູກຜັກກະທຽມໃຫ້ໄດ້ຫຼາຍຂຶ້ນໃຫ້ກາຍເປັນສິນຄ້າສົ່ງອອກຂາຍເພື່ອເປັນລາຍຮັບໃຫ້ແກ່ຊາວກະສິກອນເປັນການປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນໃຫ້ດີຂຶ້ນ ແລະ ສາມາດນຳລາຍຮັບໄປຊື້ອາຫານມາບໍລິໂພກໃຫ້ໄດ້ຕາມຫຼັກໂພຊະນາການທາງດ້ານອາຫານໃຫ້ຫຼາຍຂຶ້ນ.

ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາ ໃນບາດກ້າວທຳອິດ ຂອງໂຄງການກະສິກຳເພື່ອໂພຊະນາການຮ່ວມມືກັບຊຸ່ງວຊານສົມທົບກັບສະພາບການຜະລິດຂອງກະສິກອນຂັ້ນພື້ນຖານໃນແຕ່ລະທ້ອງຖິ່ນ ແລະ ປະສານງານພະນັກງານຂອງໂຄງການ IFAD/GAFSP ເພື່ອພັດທະນາມາເປັນເຄື່ອງມືໃຫ້ແກ່ພະນັກງານຂັ້ນແຂວງ,ເມືອງສາມາດຖ່າຍທອດໄປເຖິງຕາມຄວາມຕ້ອງການຂອງຊາວກະສິກອນໃນແຂວງເປົ້າໝາຍໂຄງການ.

**ຂຽນ ແລະ ຮຽບຮຽງໂດຍ:**

ສັກສະຫຍາມ ພະນົມສຸກ

**ອອກແບບ ແລະ ຈັດໜ້າໂດຍ:**

ອຸໄລທຳ ລາຊະສົມມາ ແລະ ອານົງ ວິໄລວັນ

**ຜູ້ກວດແກ້:**

ປອ ທອງຄູນ ສີສະໄພທອງ ແລະ ພັດທະນາ ແສງອຸ່ນແກ້ວ

# ສາລະບານ


| | ໜ້າ |
|---|---|
| ຂໍ້ແນະນຳ | 3 |
| ສາລະບານ | 4 |
| ຄຳນຳ | 5 |
| 1. ລັກສະນະທົ່ວໄປການປູກຜັກສວນຄົວຕາມລະດູການ | 6 |
| 2. ການປູກຕາມລະດູການ | 9 |
| 3. ຂັ້ນຕອນການປູກຜັກສວນຄົວຕາມລະດູການ | 11 |
| 4. ການບົວລະບັດຮັກສາ | 17 |
| 5. ພະຍາດທີ່ມັກເກີດ ແລະ ວິທີປ້ອງກັນ | 18 |
| 6. ຄາດໝາຍຜົນໄດ້ຮັບ | 20 |
| ເອກະສານອ້າງອີງ | 21 |




- ບົ້ງໃຍຜັກ: ເປັນໂຕບົ້ງທີ່ເກີດຈາກໄຂ່ທີ່ແມ່ແມງກະບີກາງຄືນວາງໄຂ່ກ້ອງໃບ ໄຂ່ມີສີເຫຼືອງຂ້ອນຂ້າງກົມວາງຕິດກັນ 2-5 ຟອງ ອາຍຸໄຂ່ຟັກປະມານ 3 ວັນຈຶ່ງເປັນໂຕບົ້ງມີຂະໜາດຂ້ອນຂ້າງນ້ອຍເບິ່ງເຫັນຍາກມີການຈະເລີນເຕີບໂຕໄວກວ່າບົ້ງຊະນິດອື່ນ ໄລຍະເວລາພຽງ 1 ອາທິດສາມາດຈະເລີນເຕີບໂຕເຕັມທີມີຂະໜາດ 1 ຊັງຕີແມັດ ສ່ວນທ້າຍມີປຸ່ມຍື່ນອອກມາ 2 ແຊກ ເມື່ອຖືກໂຕຈະດີ້ນຢ່າງແຮງ ແລະ ຖີ້ມໂຕລົງດິນໂດຍການສ້າງໄຍ ດັກແດ້ມີຂະໜາດ1 ຊັງຕີແມັດ ຢູ່ພາຍໃນໄຍບາງໆຕິດກ້ອງໃບ ອາຍຸດັກແດ້ 3-4 ວັນ ໂຕເຕັມໄວມີສີເຫຼືອງເທົາທີ່ເຄິ່ງຫຼັງມີແຖມສີເຫຼືອງ ອາຍຸໂຕເຕັມໄວ1ອາທິດ ໝັກພົບເຫັນຕົວເຕັມໄວຕາມໃບ ໂດຍເກາະຢູ່ໃນລັກສະນະຍົກຫົວຂຶ້ນ

### 5.2 ວິທີປ້ອງກັນ

(1). ການປູກພືດໝູນວຽນ.

(2). ສຳລັບແມງໄມ້ໃສ່ກັບດັກກາວໜຽວສີເຫຼືອງ ໃນອັດຕາ 60-80 ກັບດັກຕໍ່ໄລ່.

(3). ສີດພົ່ນຢາສະໝຸນໄພສູດປ້ອງກັນກຳຈັດພະຍາດ ແລະ ແມງໄມ້ ທຸກໆ 5-7 ວັນຕໍ່ຄັ້ງ.

(4). ການໃຊ້ກັບດັກແສງໄຟເຊິ່ງອາດເປັນກັບດັກໃນການດັກຈັບແມງໄມ້ຊະນິດລອດໄຟຟ້າ ແມ່ນຈະທຳລາຍແມງໄມ້ໂດຍກົງ ຫຼື ຈະນຳໃຊ້ຫຼອດໄຟສີນ້ຳເງິນ ເພື່ອລໍ້ໂຕແກ່ຂອງແມງກະເບື້ອກາງຄືນ ເພື່ອໃຫ້ມາຕົກໃນພາສະນະທີ່ບັນຈຸນ້ຳ ຫຼື ບັນນຈຸນ້ຳມັນ.

**4.2 ການໃສ່ຝຸ່ນ:** ໃສ່ໃນຊ່ວງກຽມດິນ ຫຼື ຮອງກົ້ນຂຸມປູກ ຄວນໃສ່ຝຸ່ນຄອກ ຫຼື ຝຸ່ນໝັກ ເພື່ອປັບໂຄງສ້າງຂອງດິນ ຫຼັງຈາກຜັກ ມີໃບຈິງແລ້ວໃຫ້ໃສ່ຝຸ່ນວິທະຍາສາດ ສູດ 46-00-00 ປະມານ 15-30 ກຼາມ, ປະສົມ ນ້ຳ 10 ລິດ, ສີດໃຫ້ທົ່ວໜານປູກ ເພື່ອຊ່ວຍໃນການອອກດອກ ແລະ ໃຫ້ໝາກ ໃນນັ້ນການໃສ່ຝຸ່ນຜັກແມ່ນມີການປະຕິບັດກັນຫຼາຍແບບທີ່ແຕກຕ່າງກັນໄປໃນແຕ່ລະທ້ອງຖິ່ນ.

## 5. ພະຍາດທີ່ມັກເກີດ ແລະ ວິທີປ້ອງກັນ

### 5.1 ພະຍາດທີ່ມັກເກີດ

- ແມງມັດຜັກ: ເປັນແມງປີກແຂງຂະໜາດນ້ອຍຍາວ 1.5 ມິນລີແມັດ ໂຕເຕັມໄວຈະວາງໄຂ່ໃນດິນບໍລິເວນໃກ້ໆ ຕົ້ນພຶດໂຕອ່ອນມີຂະໜາດນ້ອຍສີຂາວໃສ ໃຫຍ່ເຕັມທີຍາວປະມານ 0.5 ຊັງຕີແມັດ ແມງມັດຜັກມີນິໄສທີ່ສັງເກດເຫັນງ່າຍຄືເມື່ອຖືກກະທົບກະເທືອນຈະກະໂດດ ໂດຍອາໄສຂາຫຼັງ ສ່ວນໂຄນຂາໃຫຍ່ຈຶ່ງສາມາດດີດໂຕໄປໄດ້ໄກ.
- ເພ້ຍອ່ອນ: ເປັນຕົວອ່ອນຂອງເພ້ຍອ່ອນອອກຈາກທ້ອງແມ່ໄດ້ໂດຍໄມ້ຕ້ອງໄດ້ຮັບການປະສົມພັນ ຕົວອ່ອນເມື່ອອອກຈາກແມ່ໃໝ່ໆ ຈະພົບວ່າມີລຳໂຕຂະໜາດນ້ອຍຫຼາຍ ຕ້ອງເບິ່ງດ້ວຍກ້ອງຈຸລະທັດ ລຳຕົວມີສີຂຽວອອ່ນ ຕາສີດຳຂາທັງ 3 ຄູ່ມີສີຂຽວກັບລຳຕົວກັບລຳຕົວ ໜວດສັ້ນ ຮູບຮ່າງຄ້າຍຕົວເຕັມໄວໄລຍະເປັນຕົວອອ່ນຈະມີການລອກຄາບ 4 ຄັ້ງຕົວອອ່ນມີອາຍຸປະມານ 5-6 ວັນຫຼັງຈາກນັ້ນຈະກາຍເປັນຕົວເຕັມໄວມີທັງພວກທີ່ມີປີກ ແລະ ບໍ່ມີປີກ ໄລຍະຕົວເຕັມໄວມີຊີວິດຢູ່ໄດ້ປະມານ 6-18 ວັນ ຕົວເຕັມໄວຕົວໜຶ່ງສາມາດອອກລູກໄດ້ຕະຫຼອດຊີວິດປະມານ 75 ຕົວ.



# ຄຳນຳ

ການປູກຜັກສວນຄົວມີຄວາມສຳຄັນຕໍ່ຊີວິດປະຈຳວັນ ເພາະໃຊ້ເປັນອາຫານໃນຄົວເຮືອນໄດ້ດີ ຖ້າຫາກປູກຫຼາຍກໍ່ສາມາດນຳໄປຈຳໜາຍ ຫຼື ຂາຍໃນຕະຫຼາດໄດ້ເປັນການສ້າງລາຍຮັບອີກທາງໜຶ່ງ. ຜັກສວນຄົວແມ່ນການປູກຜັກແບບປະສົມປະສານ ໂດຍປູກພືດຫຼາຍຊະນິດໃນພື້ນທີ່ດຽວກັນເຊັ່ນ: ພື້ນທີ່ດິນວ່າງ, ແຄມຮົ້ວເຮືອນ, ໄຮ່ເຂົ້າ ແລະ ແຄມນ້ຳ ທີ່ສາມາດເກັບເອົາມາຮັບປະທານ ຫຼື ກິນໃນຄົວເຮືອນໄດ້ ແລະ ພືດຜັກຍັງມີຄວາມສຳຄັນທາງດ້ານໂພສະນາການຄື: ໃຫ້ວິຕາມິນ ແລະ ແຮ່ທາດຕ່າງໆ ແກ່ຮ່າງກາຍ ແລະ ການປູກຜັກສວນຄົວຍັງສາມາດຫຼຸດຄ່າໃຊ້ຈ່າຍໃນຄົວເຮືອນອີກດ້ວຍ

ໂດຍສ່ວນໃຫຍ່ແລ້ວປະຊາຊົນຜັກປູກຜັກໃນຍາມແລ້ງ, ຕາມແຄມນ້ຳ ແລະ ໃກ້ບ້ານ ເຊິ່ງສາມາດຕອບສະໜອງຜັກໄດ້ແຕ່ໄລຍະໃດໜຶ່ງເທົ່ານັ້ນ ແລະ ເປັນສາເຫດເຮັດໃຫ້ປະລິມານຜັກທີ່ຕອບສະໜອງຕໍ່ຄວາມຕ້ອງການບໍ່ສະໝໍ່າສະເໝີ ແລະ ພືດຜັກມີການປ່ຽນແປງທາງດ້ານລາຄາ. ການປູກຜັກສວນຄົວຕາມລະດູການ ສາມາດເປັນທາງອອກໜຶ່ງ ໃນການແກ້ໄຂການຕອບສະໜອງພືດຜັກໃຫ້ແກ່ຄອບຄົວໄດ້ໃນລະດັບໜຶ່ງ

ດັ່ງນັ້ນປື້ມຄູ່ມືສະບັບນີ້ຜູ້ຈັດທຳໄດ້ສັງລວມ ແລະ ຄັດຈ້ອນເອົາເຕັກນິກຈາກການຄົ້ນຄວ້າທົດລອງຂອງສູນຄົ້ນຄວ້າພືດຜັກ ແລະ ໄມ້ໃຫ້ໝາກ, ບັນດາເອກະສານ, ຕຳລາຕ່າງໆ ແລະ ປະສົບການ ທີ່ມີຄວາມສຳເລັດ ແລະ ແທດເໝາະກັບເຂດທີ່ມີພື້ນທີ່ພູສູງ ບົດຮຽນເລົ່ານີ້ ຊາວກະສິກອນສາມາດເອົາໃຊ້ ເຂົ້າໃນການປັບຕົວກັບສະພາບການປ່ຽນແປງຂອງດິນຟ້າອາກາດ ຕາມລະດູການ ເຊັ່ນ: ອຸນຫະພູມ, ປະລິມານນ້ຳຝົນ, ແສງແດດ ແລະ ປັດໃຈແວດລ້ອມອື່ນໆ ທີ່ເປັນຕົວກຳນົດ ຕໍ່ການຈະເລີນເຕີບໂຕຂອງບັນດາຊະນິດ ແລະ ປະເພດພືດຜັກ ເພື່ອສາມາດຜະລິດ ແລະ ສະໜອງພືດຜັກໃຫ້ແກ່ຄອບຄົວໄດ້ຕະຫຼອດປີ.

# 1. ລັກສະນະທົ່ວໄປການປູກຜັກສວນຄົວຕາມລະດູການ

ການປູກພືດຜັກສວນຄົວແມ່ນການປູກພືດຫຼາຍໆຊະນິດໄວ້ບໍລິໂພກ ຫຼື ກິນເອງພາຍໃນຄົວເຮືອນ ແລະ ຈະເຮັດໃຫ້ຜູ້ປູກໄດ້ກິນຜັກສົດທີ່ອຸດົມໄປດ້ວຍວິຕາມິນ ແລະ ເກືອແຮ່ຕ່າງໆ ມີຄວາມປອດໄພຈາກສານເຄມີ ແລະ ຫຼຸດຄ່າໃຊ້ຈ່າຍພາຍໃນຄົວເຮືອນອີກດ້ວຍ ໂດຍທົ່ວໄປຄົນເຮົາຕ້ອງການກິນຜັກ 200 ກຼາມ ເພື່ອໄດ້ສານອາຫານທີ່ຄົບຖ້ວນ

## 1.1 ຂໍ້ຄວນພິຈາລະນາໃນການປູກຜັກສວນຄົວ

- ການເລືອກສະຖານທີ່ຄວນເລືອກສະຖານທີ່ທີ່ອຸດົມສົມບູນທີ່ສຸດ ໃກ້ກັບແຫຼ່ງນ້ຳ ແລະ ທີ່ພັກພາອາໃສ ເພື່ອສະດວກໃນການປູກ, ສະດວກໃນການບົວລະບັດຮັກສາ ແລະ ສະດວກໃນການເກັບມາຮັບປະທານໄດ້ທັນທີຕາມຄວາມຕ້ອງການ.
- ແສງແດດ ແລະ ຮົ່ມເງົາມີຄວາມຈຳເປັນໃນການສັງເຄາະແສງຂອງພືດ ເພື່ອສ້າງອາຫານ ປະລິມານແສງທີ່ໄດ້ຮັບໃນພື້ນທີ່ປູກ ໃນແຕ່ລະມື້ຈະມີຜົນຕໍ່ຊະນິດຂອງຜັກທີ່ປູກ.
- ການເລືອກປະເພດຜັກທີ່ປູກຄວນເລືອກປູກຜັກໃຫ້ຫຼາຍຊະນິດ ເພື່ອໃຫ້ໄດ້ຄຸນຄ່າທາງດ້ານອາຫານທີ່ຫຼາກຫຼາຍ ເປັນຜັກທີ່ສະມາຊິກໃນຄອບຄົວໝັກກິນ ແລະ ເລືອກປູກຜັກທີ່ເໝາະສົມກັບສະພາບແວດລ້ອມ ແລະ ປູກໃຫ້ຖືກກັບລະດູການ.



**ການປູກດ້ວຍເມັດ ແລະ ຫົວ:** ແມ່ນການນຳເອົາສ່ວນຕ່າງໆ ຂອງພືດມາປູກໃສ່ດິນໂດຍກົງ ສ່ວນຫຼາຍແມ່ນພືດຜັກຈຳພວກ ຫອມບົ່ວ, ມັນຝຣັ່ງ, ຜັກທຽມ ແລະ ຫົວສີໄຄ ເປັນຕົ້ນ.



ການປູກດ້ວຍເມັດ ແລະ ຫົວ

# 4. ການບົວລະບັດຮັກສາ

**4.1 ການໃຫ້ນ້ຳ:** ຜັກເປັນພືດທີ່ຕ້ອງການນ້ຳຫຼາຍ ແຕ່ບໍ່ມັກນ້ຳຂັງ ດັ່ງນັ້ນຄວນໃຫ້ນ້ຳຢ່າງສະໝ່ຳສະເໝີຂຶ້ນກັບຄວາມຊຸ່ມຂອງດິນໃນໜານປູກ ຢ່າໃຫ້ນ້ຳຫຼາຍຈົນເກີນໄປເພາະວ່າຜັກຖ້າຖືກນ້ຳ ຫຼື ຝົນຫຼາຍໆ ມັກຈະເນົ່າງ່າຍ ສຳຫຼັບຫຍ້າທີ່ຂຶ້ນໃນໄລຍະທຳອິດຄວນຮີບກຳຈັດໂດຍໄວໂດຍການໃຊ້ມືຖອນ ຢ່າປ່ອຍໃຫ້ຫົກເພາະຫຍ້າເປັນໂຕຍາດແຍ່ງນ້ຳ ແລະ ທາດອາຫານຂອງພືດ.

(4). ການປູກໃສ່ພາຊະນະ: ການກຽມດິນໃນການປູກໃນພາສະນະຕ່າງໆ ແມ່ນ ປະກອບມີ ດິນ 1 ສ່ວນ, ແກບເຜົາ 1 ສ່ວນ, ປຸ໋ຍໝັກ 1 ແລ້ວປະສົມໃຫ້ເຂົ້າກັນ ຫົດນ້ຳໃຫ້ມີຄວາມຊຸ່ມ ຫຼັງຈາກນັ້ນກໍ່ຮາຍໃສ່ພາສະນະທີ່ຕຽມໄວ້. ການປູກດ້ວຍເມັດ ໂດຍສະເພາະຜັກທົ່ວໄປເຊັ່ນ: ໝາກເຜັດ, ໝາກເຂືອ, ຜັກກາດນາ, ຜັກກາດຊອມ, ຜັກກາດຂິວ, ຜັກກະລໍ່າປີ, ຜັກກາດຫົວ, ຖົ່ວຝັກຍາວ, ໝາກແຕງ ແລະ ອື່ນໆ ອີກ ລ້ວນແລ້ວແຕ່ໃຊ້ເມັດໃນການປູກ. ໃນການໃຊ້ເມັດປູກແມ່ນຈະການກ້າເບ້ຍກ່ອນແລ້ວຈຶ່ງຍ້າຍປູກ ການຢອດເມັດພັນໃສ່ແຕະກ້າແມ່ນ 2 ເມັດ ຫຼັງຈາກພືດອອກໃບແທ້ 2 ໃບ ກໍ່ນຳໄປປູກ ເໝາະສຳລັບໃນຊ່ວງລະດູຝົນ ເພາະວ່າການກ້າເບ້ຍແລ້ວຍ້າຍປູກຈະເຮັດໃຫ້ຕົ້ນກ້າມີຄວາມແຂງແຮງກ່ອນທີ່ຈະຍ້າຍລົງໄປປູກໃນພາສະນະທີ່ກຽມໄວ້ ແລະ ການຫວ່ານເມັດໂດຍກົງໃນພາສະນະປູກ ເມື່ອຕົ້ນຜັກອອກໃບຈິງ 2 ໃບ ກໍ່ຖອນແຍກຕົ້ນທີ່ໜາແໜ້ນເກີນໄປອອກເພື່ອຈັດໄລຍະຫ່າງຂອງການປູກ



ການປູກໃສ່ພາຊະນະ



## 1.2 ຄຸນປະໂຫຍດຂອງພືດຜັກສວນຄົວ

- ໃຊ້ຮັບປະທານເປັນອາຫານໂດຍຮັບປະທານຜັກສົດ ຫຼື ນຳໄປປຸງແຕ່ງເປັນອາຫານ ເຊິ່ງຜັກແຕ່ລະຊະນິດແມ່ນຈະມີສານອາຫານແຕກຕ່າງກັນເຊັ່ນ: ໂປຼຕີນ, ເສັ້ນໄຍ, ຟົດສະຟໍຣັດ, ວິຕາມິນ, ຄາໂບໄຮເດດ ແລະ ແຮ່ທາດອື່ນໆ.
- ໃຊ້ເປັນພືດສະໝຸນຮັກສາພະຍາດ.
- ເພື່ອຫຼຸດຄ່າໃຊ້ຈ່າຍໃນການຊື້ຜັກເພື່ອປະກອບອາຫານ.
- ສາມາດໃຊ້ຂາຍເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ.
- ໃຊ້ພື້ນທີ່ວ່າງເປົ່າໃຫ້ເກີດປະໂຫຍດ.
- ສາມາດສ້າງຄວາມສຳພັນ ແລະ ສາຍໃຍຮັກທີ່ດີໃຫ້ແກ່ຄອບຄົວ.

## 1.3 ປະເພດຂອງແນວພັນທີ່ເໝາະສົມ

ຜັກແຕ່ລະຊະນິດແມ່ນມີຄວາມແຕກຕ່າງກັນທາງດ້ານອາຍຸການເກັບກ່ຽວ ແລະ ລະດູການປູກ ການວາງແຜນການປູກຄວນໃຫ້ເໝາະສົມກັບສະພາບແວດລ້ອມ ແລະ ລະດູການ ຈະເຮັດໃຫ້ໄດ້ຜົນຜະລິດທີ່ສະໝ່ຳສະເໝີ ແລະ ໃຊ້ພື້ນທີ່ໃຫ້ເກີດປະໂຫຍດໄດ້ເຕັມທີ່ ໂດຍສາມາດຈຳແນກໄດ້ຕາມອາຍຸການເກັບກ່ຽວຂອງພືດ.

ການຈຳແນກອາຍຸຜັກຕາມການເກັບກ່ຽວດັ່ງນີ້:

(1) ຜັກອາຍຸສັ້ນນ້ອຍກວ່າ 2 ເດືອນໄດ້ແກ່: ຜັກຊີ, ຜັກສະຫຼັດ, ຜັກກາດຊອມ, ຜັກກາດຂິວ, ຜັກບົ້ງ, ຜັກກາດຫົວ,ຜັກກາດຂາວ, ໝາກແຕງ ແລະ ຜັກຫົມ.

(2) ຜັກອາຍຸປານກາງ 2-5 ເດືອນໄດ້ແກ່: ກະລໍ່າປີ, ຜັກກາດຂາວຮໍ່, ບ່ອກໂຄລີ, ກະລໍ່າດອກ, ໝາກຖົ່ວຝັກຍາວ, ຫອມບົ່ວຫົວໃຫຍ່, ໝາກເລັ່ນ, ໝາກເຜັດ, ໝາກໂມ, ໝາກມະຣະ, ໝາກບວບ, ໝາກອຶ ແລະ ມັນຝຣັ່ງ.

(3) ຜັກຢືນຕົ້ນອາຍຸ 1 ປີໄດ້ແກ່: ຜັກຫວານ, ໝາກເຂືອ, ຜັກຄະ, ຜັກອີເລີດ, ຜັກບົ່ວລະພາ, ຜັກກະເພົາ, ຖົ່ວພູ, ຫົວສີໄຄ, ຜັກອີ່ຕູ່, ຂີງ, ໜໍ່ໄມ້ຝຣັ່ງ ແລະ ຂ່າ.

## 1.4 ການຈໍາແນກພືດຜັກອີງຕາມວິທີການປູກ

ສາມາດຈໍາແນກອອກເປັນ 4 ກຸ່ມຄື:

(1) ປະເພດທີ່ຕ້ອງການກ້າເບັ້ຍແລ້ວຈຶ່ງປູກ ເປັນປະເພດຜັກທີ່ມີລາຄາແພງ ເມັດມີຂະໜາດນ້ອຍ ການບົວລະບັກຮັກສາ ເວລາກ້າແກ່ນ ຕ້ອງການຄວາມລະອຽດກວ່າພືດຊະນິດອື່ນ ເຊັ່ນ: ໝາກເລັ່ນ, ໝາກເຜັດ, ໝາກເຂືອ, ກະລໍ່າດອກ, ກະລໍ່າປີ, ຜັກກາດຂາວປີ, ຜັກບົ່ວຫົວໃຫຍ່.

(2) ປະເພດຜັກທີ່ຫວ່ານເມັດໂດຍກົງ ເປັນຈໍາພວກຜັກທີ່ເມັດພັນລາຄາຖືກ ແລະຕ້ອງການຈໍານວນຫຼາຍ, ເຊິ່ງຜັກປະເພດນີ້ມີອາຍຸສັ້ນໃຫຍ່ໄວ ມີໄລຍະປູກທີ່ຖີ່ ມີຈໍາພວກຜັກຊີ, ຜັກກາດກວາງຕຸ້ງ, ຜັກກາດຂຽວປີ, ຜັກກາດນາ ແລະ ຜັກກາດຂີວ.

(3) ປະເພດຜັກທີ່ໃຊ້ຂຸມປູກ ເປັນຜັກທີ່ມີເມັດໃຫຍ່ ເຊັ່ນ ຖົ່ວຝັກຍາວ, ຖົ່ວຍັດ, ຖົ່ວພຸ່ມ, ຖົ່ວພູ, ໝາກມະຣະ ຫຼືຜັກໄຊ, ໝາກບວບ, ໝາກແຕງຄ້າງ, ໝາກໂມ ແລະ ໝາກອຶ ເປັນຕົ້ນ.



ຖອນແຍກຕົ້ນທີ່ໜາແໜ້ນເກີນໄປອອກເພື່ອຈັດໄລຍະຫ່າງຂອງການປູກ ວິທີນີ້ ຖ້າຫາກຜູ້ປູກບໍ່ມີຄວາມສໍານານອາດເຮັດໃຫ້ສິ້ນເປືອງເມັດພັນ ແລະ ການຫວ່ານເມັດພັນອາດຈະບໍ່ກະຈາຍດີເຮັດໃຫ້ຜັກງອກຂຶ້ນເປັນກະຈຸກ ຫຼື ເປັນຈຸ້ມ ວິທີແກ້ໄຂແມ່ນປະສົມເມັດພັນໃສ່ກັບຊາຍໜ່ອຍໜຶ່ງເພື່ອເຮັດໃຫ້ເມັດພັນກະຈາຍດີຂຶ້ນ ຫຼັງຈາກນັ້ນກໍ່ໃຊ້ເຟືອງ ຫຼື ຫຍ້າແຫ້ງປົກເພື່ອຮັກສາຄວາມຊຸ່ມ



ການຫວ່ານເມັດໂດຍກົງໃນໜານປູກ

(3). ການປູກໃນຂຸມປູກໂດຍກົງ ໂດຍການຂຸດຂຸມ ແລະ ປະສົມກັບຝຸ່ນຄອກໃຫ້ເຂົ້າກັນ ແລ້ວນໍາເມັດພັນທີ່ກຽມໄວ້ລົງປູກ ໂດຍຢອດເມັດພັນລົງໃນຂຸມຈໍານວນ 2-3 ເມັດຕໍ່ຂຸມ ໂດຍຝັງເລິກປະມານ 1.2-2 ຊັງຕີແມັດ ເມື່ອຕົ້ນມີໃບຈີງ 2 ໃບ ກໍ່ເລືອກຫຼົກຕົ້ນທີ່ອ່ອນແອອອກໃຫ້ເຫຼືອ 1 ຕົ້ນຕໍ່ຂຸມ ເຊິ່ງໄລຍະຫ່າງແມ່ນຂຶ້ນກັບຊະນິດຜັກທີ່ປູກ ເຊິ່ງເໝາະກັບຜັກທີ່ມີເມັດໃຫຍ່ ເຊັ່ນ: ໝາກເຜັດ ຖົ່ວຝັກຍາວ, ໝາກແຕງ, ໝາກອຶ, ໝາກບວບ ຫຼື ຜັກທີ່ກິນຫົວເຊັ່ນ: ຜັກກາດຫົວ, ແຄຣລ໋ອດ ແລະ ອື່ນໆ.

## 3.3 ການປູກ

3.3.1 **ການປູກດ້ວຍເມັດ:** ສຳຫຼັບຜັກທົ່ວໄປເຊັ່ນ: ໝາກເຜັດ, ໝາກເຂືອ, ຜັກກາດນາ, ຜັກກາດຊອມ, ຜັກກາດຂີວ, ຜັກກະລໍ່າປີ, ຜັກກາດຫົວ, ຖົ່ວຝັກຍາວ, ໝາກແຕງ ແລະ ອື່ນໆ ອີກ ລ້ວນແລ້ວແຕ່ໃຊ້ເມັດໃນການປູກ. ໃນການໃຊ້ເມັດປູກແມ່ນໄດແຍກອອກເປັນ 4 ວິທີຄື:

(1). ການກ້າເບ້ຍກ່ອນແລ້ວຈຶ່ງຍ້າຍປູກແມ່ນ ການຢອດເມັດພັນໃສ່ແຕະກ້າ 2 ເມັດ ຫຼັງຈາກພົດອອກໃບແທ້ 2 ໃບ ກໍ່ນຳໄປປູກໃສ່ໝານ ຫຼື ພາສະນະຕ່າງໆ ເຊິ່ງເໝາະສຳລັບໃນຊ່ວງລະດູຝົນ ເພາະວ່າການກ້າເບ້ຍແລ້ວຍ້າຍປູກຈະເຮັດໃຫ້ຕົ້ນກ້າມີຄວາມແຂງແຮງກ່ອນທີ່ຈະຍ້າຍລົງໄປປູກໃນໝານປູກ ຫຼື ແປງປູກ.



ການກ້າເບ້ຍກ່ອນແລ້ວຈຶ່ງຍ້າຍປູກ

(2). ການຫວ່ານເມັດໂດຍກົງໃນໝານປູກໃຫ້ຫວ່ານເມັດໃຫ້ທົ່ວໝານ ຫຼັງຈາກນັ້ນກໍ່ນຳເອົາຝຸ່ນຄອກ ຫຼື ຝຸ່ນໝັກມາໂຮຍປົກບາງໆ ແລ້ວນຳເອົາເຟືອງ ຫຼື ຫຍ້າ



(4) ປະເພດຜັກທີ່ໃຊ້ສ່ວນຕ່າງໆ ນຳມາປູກ (ຮາກ, ລຳຕົ້ນ, ຫົວ) ພວກເຮົາສາມາດພົບເຫັນຈຳພວກ ກະທຽມ, ຜັກບົ່ວແບ່ງ, ຜັກບົ່ວຫົວແດງ, ຂີງ, ຂ່າ ແລະ ຫົວສີໄຄ.



ການປູກຜັກສວນຄົວ

## 2. ການປູກຕາມລະດູການ

ການປູກຜັກສວນຄົວຄວນເລືອກຊະນິດຜັກທີ່ຈະປູກໃຫ້ຖືກຕາມລະດູການເພາະວ່າຈະເຮັດໃຫ້ການເບິ່ງແຍງຮັກສາງ່າຍ ໄດ້ຜັກທີ່ມີຄຸນນະພາບ, ໄດ້ຜົນຜະລິດດີ. ມີພະຍາດ ແລະ ແມງໄມ້ລົບກວນໜ້ອຍ ເຊິ່ງລະດູການໃນການປູກຜັກແຕ່ລະຊະນິດມີດັ່ງນີ້:

- **ເດືອນ ພະຈິກ ຫາ ມັງກອນ:** ຜັກສະຫຼັດ, ຫອມບົ່ວແບ່ງ, ຜັກເຊີນາລີ້, ຜັກກາດຂາວຫໍ່, ຜັກກະລໍ່າປີ, , ຜັກກາດຂີວ, ຜັກກະລໍ່າດອກ, ຖົ່ວຂຽວ, ຫອມບົ່ວຫົວໃຫຍ່, ຜັກກະທຽມ ແລະ ຜັກຊີ.
- **ເດືອນ ກຸມພາ ຫາ ເມສາ:** ຫອມປ້ອມ, ຜັກກາດຫົວນ້ອຍ, ຜັກບົ້ງ, ຖົ່ວຝັກຍາວ, ໝາກແຕງ, ໝາກມະຣະ, ຜັກກາດຂາວຣົ່, ຜັກກາດຊອມ ແລະ ຜັກກາດຂີວ.
- **ເດືອນ ພຶດສະພາ ຫາ ກໍລະກົດ:** ໝາກບວບ, ໝາກໜອຍ, ໝາກອຶ, ຜັກກາດຂີວ, ຜັກບົ່ວຫົວນ້ອຍ, ຜັກກາດນາ ແລະ ຜັກກາດຊອມ.
- **ເດືອນ ສິງຫາ ຫາ ຕຸລາ**: ຜັກຊີ, ຜັກຫົມ, ຜັກເຊີນາລີ້, ຜັກກາດຂາວ, ຜັກກາດຂີວ, ຜັກກາດຊອມ, ມັນດ້າງ, ມັນເຜີາ, ຜັກສະຫຼັດ, ຜັກກາດນາ, ຜັກບົ້ງ, ໝາກເຜັດ ແລະ ໝາກເຂືອ.
- **ຜັກສວນຄົວທີ່ປູກໄດ້ຕະຫຼອດປີມີ:** ຂີງ, ຂ່າ, ຫົວສີໄຄ, ຜັກຫວານ, ບົວລະພາ ແລະ ຜັກອີ່ຕູ່.



ຜັກກາດນາ



ພັນຕ້ອງເລືອກເມັດພັນທີ່ເຊື່ອຖືໄດ້ ເຊິ່ງແນວພັນທີ່ເໝາະສົມທີ່ສູດໃນລະດູແລ້ງ ໄດ້ແກ່: ຜັກສະຫຼັດ, ຫອມບົ່ວແບ່ງ, ຜັກກາດຂາວຣົ່, ຜັກກະລໍ່າປີ, ຜັກກາດຂີວ, ຜັກກະລໍ່າດອກ, ຖົ່ວຂຽວ, ຫອມບົ່ວຫົວໃຫຍ່, ຜັກກະທຽມ, ຜັກຊີ, ໝາກເຜັດ, ໝາກເລັ່ນ, ກະເພົາ, ບົວລະພາ ແລະ ອື່ນໆ.



ການກຽມດິນໃນການປູກໃນພາຊະນະ



ກະກຽມແນວພັນການກ້າເບ້ຍ



ການປູກຜັກສວນຄົວຕາມລະດູການ

## 3. ຂັ້ນຕອນການປູກຜັກສວນຄົວຕາມລະດູການ

### 3.1 ການປູກໃນພື້ນດິນ ຫຼື ໜານ

ໄຖ ຫຼື ຂຸດດິນຕາກແດດໃຫ້ແຫ້ງ ເພື່ອທຳລາຍພະຍາດ ແມງໄມ້ສັດຕູພືດ ແລະ ວັດສະພືດທີ່ຢູ່ໃນດິນປະໄວ້ປະມານ 10 ວັນ, ຫຼັງຈາກນັ້ນກໍ່ທຳຂຸດ ຫຼື ການໄຖຄາດ ໃຫ້ລະອຽດເກັບເສດວັດສະພືດຕ່າງໆ ອອກຫວານຝຸ່ນຄອກ (ຂີ້ເປັດ, ຂີ້ໄກ່, ຂີ້ໝູ, ຂີ້ງົວ ແລະ ອື່ນໆ) ຫຼື ຝຸ່ນບົ່ມທີ່ສະລາຍຕົວດີແລ້ວ ໃນອັດຕາ 2-3 ກິໂລກຼາມຕໍ່ 1 ຕາແມັດ, ຈາກນັ້ນກໍ່ຍົກເປັນແປງປູກໃຫ້ກວ້າງປະມານ 1-1.5 ແມັດ, ສ່ວນຄວາມຍາວແມ່ນຂຶ້ນກັບຄວາມເໝາະສົມຂອງພື້ນທີ່ ຍົກໜານໃຫ້ສູງເຖິງ 15 - 20 ຊັງຕີແມັດ ຫຼື ອາດສູງກວ່ານັ້ນ ຫາກພື້ນທີ່ປູກລະບາຍນ້ຳຍາກ ຈຶ່ງຮ່ອງລະບາຍນ້ຳລະຫວ່າງໜານຕໍ່ໜານໃຫ້ກ້ວາງປະມານ 50 ຊັງຕີແມັດ, ເພື່ອໃຫ້ສາມາດລະບາຍນ້ຳໄດ້.





ການກະກຽມພື້ນດິນ ຫຼື ໜານ

### 3.2 ການກຽມແນວພັນ

ການກຽມເມັດພັນແມ່ນຕ້ອງເລືອກເມັດພັນທີ່ດີຈຶ່ງຊ່ວຍຄຸ້ມຄ່າຕໍ່ການລົງທຶນ, ປະຢັດເວລາ ແລະ ປະຢັດແຮງງານ ສາມາດໃຫ້ຜົນຜະລິດສູງ ສະນັ້ນການກຽມແນວພັນທີ່ຈະປູກແມ່ນອີງຕາມລັກສະນະເມັດພັນເຊັ່ນ:

- ເມັດພັນທີ່ມີເປືອກໜາແມ່ນໃຫ້ແຊ່ນ້ຳປະມານ 1 ຄືນ ແລ້ວຈຶ່ງວານລົງໜານ.
- ເມັດພັນທີ່ມີເປືອກບາງແມ່ນສາມາດວານລົງໜານໄດ້ເລີຍເຊັ່ນວ່າ: ຜັກສະຫຼັດ, ຜັກກາດນາ, ຜັກກາດຂິວ ແລະ ອື່ນໆ.
- ປະເພດທີ່ປູກດ້ວຍຫົວແມ່ນໃຫ້ຕັດສ່ວນປາຍຂອງຫົວປະມານ ¼ ຂອງຫົວເຊັ່ນວ່າ: ຜັກບົ່ວ, ຜັກທຽມ ແລະ ອື່ນໆ.

ແຕ່ການຊື້ເມັດພັນຜັກບາງຊະນິດມາປູກອາດບໍ່ສາມາດເກັບເມັດພັນໄວ້ໄດ້ຖ້າເປັນຜັກພື້ນບ້ານສາມາດເກັບເມັດພັນໄວ້ເອງໄດ້ແຕ່ຜົນຜະລິດອາດຈະບໍ່ສູງຖ້າທຽບໃສ່ແນວພັນປັບປຸງທີ່ວາງຂາຍຕາມທ້ອງຕະຫຼາດ, ສະນັ້ນການເລືອກເມັດ